ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກອງທຶນສົ່ງເສີມ ຈນກ

ເລກທີ:..0340..../ທສວ

ນະຄອນຫຼວງວຽງຈັນ, ວັນທີ....12....ພຶດສະພາ 2026

# ໜັງສືແຈ້ງເຊີນເຂົ້າຮ່ວມການປະມູນ

1. ກອງທຶນສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ທສວ), ກະຊວງອຸດສາຫະກຳ ແລະ ການຄ້າ ຂໍເຊີນບັນດາບໍລິສັດ ທີ່ມີຄວາມສົນໃຈ ແລະ ມີຄຸນນະວຸດທິເໝາະສົມເຂົ້າຍື່ນຊອງປະມູນ ສຳລັບການສະໜອງບໍລິການໂຄສະນາ ປະຊາສຳພັນ ວຽກງານຂອງ ທສວ ***ເປັນໄລຍະ 12 ເດືອນ;***
2. ບໍລິສັດ ທີ່ມີຄຸນນະວຸດທິເໝາະສົມ ແລະ ມີຄວາມສົນໃຈສາມາດຕິດຕໍ່ພົວພັນເອົາເອກະສານການປະມູນໄດ້ຢູ່ ທີ່ຊັ້ນ 03, ຫ້ອງ 301 ຂອງກົມສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ກຈນກ) ກະຊວງອຸດສາຫະກຳ ແລະ ການຄ້າ, ເບີໂທ 410005 021; 020 2309 8876 8876 ໃນໂມງລັດຖະການ (8:30 ໂມງ ຫາ 16:00ໂມງ, ວັນຈັນ ເຖິງ ວັນສຸກ);
3. ການປະມູນ ແມ່ນອະນຸຍາດໃຫ້ທຸກໆ ບໍລິສັດທີ່ມີຄຸນນະວຸດທິເໝາະສົມ, ມີໃບທະບຽນວິສາຫະກິດ; ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບຂໍ້ມູນຂ່າວສານ ແລະ ການຕັດຕໍ່ວິດີໂອ, ການສື່ສານ, ການເຄື່ອນໄຫວດ້ານວຽກງານໂຄສະນາປະຊາສຳພັນ; ໃບຢັ້ງຢືນການເສຍອາກອນ ປະຈຳປີ 2025; ໃບຢັ້ງຢືນທະນະການເງິນ (ບັນຊີສຳຮອງ) ຂອງບໍລິສັດໄລຍະ 02 ເດືອນທີ່ຜ່ານມາ;
4. ເອກະສານການປະມູນ ສາມາດຊື້ໄດ້ໂດຍຜູ້ປະມູນທີ່ສົນໃຈ ***(ເລີ່ມແຕ່ວັນທີ 18 ພຶດສະພາ ຫາ 22 ມິຖຸນາ 2026)*** ໃນລາຄາ ***4,000,000 ກີບ/1 ຊຸດ*** ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ, ວິທີການຊຳລະຕ້ອງຈ່າຍເປັນ ***ເງິນສົດ;***
5. ຊອງປະມູນຕ້ອງສົ່ງກ່ອນເວລາ 14:00 ໂມງ ຂອງວັນທີ 22 ມິຖຸນາ 2026 ຢູ່ຊັ້ນ 02, ຫ້ອງປະຊຸມ 201 ຂອງ ກຈນກ ແລະ ຊອງປະມູນທຸກໆຊອງ ຈະໄດ້ເປີດໃນວັນດຽວກັນ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳ (ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ);
6. ທຸກຊອງປະມູນຕ້ອງໄດ້ປະກອບມີໜັງສືຄ້ຳປະກັນການປະມູນດ້ວຍກຽດ ຫຼື ໜັງສືຄ້ຳປະກັນການປະມູນຈາກທະນາຄານ ຫຼື ເງິນສົດ ຊຶ່ງມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫຼຸດ 2% (ສອງສ່ວນຮ້ອຍ) ຂອງລາຄາປະມູນ ແລະ ໃສ່ມາພ້ອມຊອງປະມູນ;
7. ການປະມູນໃນຄັ້ງນີ້ ຈະດຳເນີນຕາມຂັ້ນຕອນການປະມູນເປີດກ້ວາງທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

**ຜູ້ອຳນວຍການກອງທຶນ**

**ສະເຫຼີມໄຊ ຫຼຸ່ມມະນີ**